# ເຈົ້າໜ້າທີ່ລະດັບສູງ WB ເຂົ້າພົບຮອງຜູ້ວ່າການ BOL



*ຂ່າວ-ພາບ-ສຽງ: ລັດສະໝີ ດວງສັດຈະ

ໃນວັນທີ 28 ມັງກອນຜ່ານມາ ເຈົ້າໜ້າທີ່ລະດັບສູງຂອງທະນາຄານໂລກ (WB) ໂດຍມີທ່ານ ອີຟາ ອຳປີ ຮອງຫົວໜ້າກຸ່ມອາຊີ ຕາເວັນສ່ຽງໃຕ້ປະຈຳ WB ໄດ້ເຂົ້າຢ້ຽມຂ່ຳນັບ ທ່ານ ສົມພາວ ໄຟສິດ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ (BOL) ທີ່ຫ້ອງຮັບແຂກ BOL ນະຄອນຫຼວງວຽງຈັນ ເນື່ອງໃນໂອກາດທີ່ ທ່ານ ອີຟາ ອຳປີ ໄດ້ຮັບການແຕ່ງຕັ້ງມາຮັບໜ້າທີ່ໃໝ່.

ໃນໂອກາດດັ່ງກ່າວ ເຈົ້າໜ້າທີ່ລະດັບສູງ WB ທ່ານນີ້ກໍ່ໄດ້ລາຍງານສະພາບການເຄື່ອນໄຫວວຽກງານໃນອົງການ ແລະ ສະພາຍການຂອງ ສປປ ລາວ ໃນຖານະເປັນປະເທດສະມາຊິກໃນກຸ່ມໃຫ້ ທ່ານຮອງຜູ້ວ່າການ BOL ຮັບຊາບຈາກນັ້ນ ທ່ານ ສົມພາວ ໄຟສິດ ກໍ່ໄດ້ຕີລາຄາສູງຕໍ່ໝາກຜົນແຫ່ງການພົວພັນຮ່ວມມືລະຫວ່າງສອງຝ່າຍ, ໂດຍສະເພາະໃນໄລຍະຜ່ານມາ WB ໄດ້ໃຫ້ການຊ່ວຍເຫຼືອອັນລ້ຳຄ່າແກ່ປະເທດລາວດ້ວຍດີສະເໝີມາ ແລະ ພ້ອມດຽວກັນ ທ່ານຮອງຜູ້ວ່າການ BOL ກໍ່ໄດ້ສະແດງຄວາມຊົມ

ເຊີຍຕໍ່ການມາຮັບໜ້າທີ່ໃໝ່ຂອງ ທ່ານດຣ. ອີຟາ ອຳປີ ແລະ ຫວັງຢ່າງຍິ່ງວ່າ: ທ່ານຈະນຳເອົາຜົນປະໂຫຍດອັນສູງສົ່ງມາສູ່ບັນດາປະເທດສະມາຊິກໃນພູມມິພາກນີ້, ສຳລັບ ສປປ ລາວ ໃນຖານະປະເທດສະມາຊິກກໍ່ຈະໃຫ້ການຮ່ວມມືອັນດີ ແລະ ແຕກດອກອອກຜົນງອກງາມຍິ່ງໆຂຶ້ນ.